# "ບົດອອກຂ່າວ"

## ກອງປະຊຸມປະທານ ແລະປະທານຮ່ວມ ໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບ ຄູ່ຮ່ວມພັດທະນາ

*ນະຄອນຫຼວງວຽງຈັນ, ວັນທີ 03 ຕຸລາ 2024.*

ກົມຮ່ວມມືອກົມ, ກະຊວງແຜນການ ແລະການລົງທຶນ ຮ່ວມກັບ ອົງການສະຫະປະຊາຊາດ ປະຈຳ ສປປ ລາວ ໄດ້ຈັດກອງປະຊຸມປະທານ-ປະທານຮ່ວມ ໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບ ຄູ່ຮ່ວມພັດທະນາ ທີ່ນະຄອນຫລວງວຽງຈັນ,ໃນວັນທີ 03 ກໍລະກົດ 2024 ພາຍໃຕ້ການເປັນປະທານ ຂອງ ທ່ານ ນາງ ສີສົມບູນ ອຸນາວົງ ຫົວໜ້າກົມຮ່ວມມືສາກົນ ກະຊວງແຜນການ ແລະການລົງທຶນ ແລະ ທ່ານ ບັກໂຮເດຍ ເບີຄະນ໋ອຟ, ຜູ້ປະສານງານອົງການອົງການສະຫະປະຊາຊາດ ປະຈຳ ສປປ ລາວ, ເຊິ່ງມີບັນດາທ່ານຫົວໜ້າຫ້ອງການ, ຫົວໜ້າກົມ, ຜູ້ຕາງໜ້າ ຈາກກະຊວງຂະແໜງການ ແລະ ຄູ່ຮ່ວມທະນາ, ບັນດາທ່ານເອກອັກຄະລັດຖະທູດ, ຫົວໜ້າອົງການຈັດຕັ້ງສາກົນ ໂດຍຕາງໜ້າ ໃຫ້ແກ່ ປະທານ-ປະທານຮ່ວມ ຂອງໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບຄູ່ຮ່ວມພັດທະນາ ເຂົ້າຮ່ວມເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ນາງ ສີສົມບູນ ອຸນາວົງ ຫົວໜ້າກົມຮ່ວມມືສາກົນ (ຫົວໜ້າກອງເລຂາຄະນະຊີ້ນຳລະດັບຊາດ ເພື່ອຂະບວນການໂຕະມົນ) ກະຊວງແຜນການ ແລະ ການລົງທຶນ ໄດ້ກ່າວວ່າ: ມື້ນີ້ເປັນໂອກາດອັນດີ ທີ່ບັນດາກະຊວງຂະແໜງການ ແລະຄູ່ຮ່ວມພັດທະນາ ຈະໄດ້ປຶກສາຫາລື ໃນການກະກຽມກອງປະຊຸມໂຕະມົນ ປະຈຳປີ 2024, ຄວາມຄືບໜ້າຂອງ 10 ໜ່ວຍງານຂະແໜງການ ໃນການຈັດຕັ້ງປະຕິບັດ ຜົນຂອງກອງປະຊຸມໂຕະມົນ ປະຈຳປີ 2023 ທີ່ຜ່ານມາ ແລະປະກອບສ່ວນຂອງໜ່ວຍງານຂະແໜງການ ໃນການຈັດຕັ້ງປະຕິບັດແຜນບູລິມະສິດຂອງຂະແໜງການ ກໍ່ຄືປະກອບສ່ວນໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ປະຈຳປີ 2024 ແລະແຜນປີ 2025 ແລະການສ້າງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X (2026-2030).

ທ່ານ ບັກໂຮເດຍ ເບີຄະນ໋ອຟ ຜູ້ປະສານງານອົງການ ສປຊ ປະຈຳ ສປປ ລາວ ໄດ້ເນັ້ນໜັກເຖິງ ຄວາມສຳຄັນຂອງແຜນບຸລິມະສິດ ໃນການນຳມາໃຊ້ແຫຼ່ງທຶນ ການຊ່ວຍເຫຼືອທາງການ ເພື່ອການພັດທະນາ ເຊິ່ງເປັນສິ່ງທ້າທາຍ ໃນທາມກາງບັນຍາກາດໂລກກຳລັງປະເຊີນ ຄວາມຫຍຸ້ງຍາກທາງດ້ານເສດຖະກິດ ແລະໄພພິບັດ. ດັ່ງນັ້ນ, ພວກເຮົາຈະຕ້ອງຮ່ວມກັນສຸມທຸກແນວຄວາມຄິດ ເພື່ອແກ້ໄຂຂໍ້ຫຍຸ້ງຍາກດັ່ງກ່າວ ໃຫ້ບັນລຸໄດ້ຕາມຈຸດປະສົງເປົ້າໝາຍ.

ໃນກອງປະຊຸມ ໄດ້ລາຍງານຄວາມຄືບໜ້າ ໃນການກະກຽມຄວາມພ້ອມໃຫ້ແກ່ ການຈັດກອງປະຊຸມໂຕະມົນ ປະຈຳປີ 2024; ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນວຽກບູລິມະສິດ ຂອງບັນດາ 10 ໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບ ຄູ່ຮ່ວມພັດທະນາ ໂດຍສະເພາະວຽກຂະບວນການໂຕະມົນ ແລະປຶກສາຫາລື ກ່ຽວກັບວຽກງານການກະກຽມຄວາມພ້ອມໃນການປ້ອງກັນ ແລະຕອບໂຕ້ໄພພິບັດ.

ໃນຕອນທ້າຍຂອງກອງປະຊຸມ, ບັນດາຄະນະຜູ້ແທນກອງປະຊຸມ ໄດ້ປະກອບຄຳເຫັນ ໂດຍສະເໜີແຜນປະຕິບັດງານ ຜ່ານຂະບວນການປຶກສາຫາລື ໃນກອງປະຊຸມດ້ານວິຊາການ ແລະກຽມຄວາມໃນດ້ານນະໂຍບາຍ, ປັບປຸງກົນໄກການປະສານງານ ລະຫວ່າງ ໜ່ວຍງານຂະແໜງການ ແລະຄູ່ຮ່ວມພັດທະນາ ໂດຍການປະຊຸມຄະນະຮັບຜິດຊອບຈາກຜູ້ຕາງໜ້າລັດຖະບານ, ຄູ່ຮ່ວມພັດທະນາ ບັນດາຄຳຄິດຄຳເຫັນທີ່ມີປະໂຫຍດຂອງຜູ້ເຂົ້າຮ່ວມກອງປະຊຸມ ແມ່ນຈະເຮັດເຮັດໃຫ້ການຈັດຕັ້ງປະຕິບັດວຽກງານ ໜ່ວຍງານຂະແໜງການ ດີຂຶ້ນກວ່າເກົ່າ ແລະ ຈະຊ່ວຍໃນການປັບປຸງນະໂຍບາຍໃຫ້ມີປະສິດທິຜົນ. ນອກຈາກນັ້ນ, ທ່ານ ນາງ ສີສົມບູນ ອຸນາວົງ ປະທານກອງປະຊຸມ ໄດ້ແຈ້ງໃຫ້ບັນດາແຂກຊາບວ່າກອງປະຊຸມປຶກສາຫາລື ຮ່າງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X ຈະຈັດຂຶ້ນກ່ອນກອງປະຊຸມໂຕະມົນ ປະຈຳປີ 2024 ເພື່ອເປັນເວທີໃນການປະກອບຄຳຄິດເຫັນຂອງບັນດາ ກະຊວງຂະແໜງການ ແລະຄູ່ຮ່ວມພັດທະນາ ໃນຮ່າງດັ່ງກ່າວ

ກອງປະຊຸມຄັ້ງນີ້ ໄດ້ມີການແລກປ່ຽນຄຳຄິດຄຳເຫັນ ຢ່າງກົງໄປກົງມາ, ມີບັນຍາກາດອັນຟົດຟື້ນ, ເຕັມໄປດ້ວຍເນື້ອໃນອັນຄົບຖ້ວນ ແລະ ໄດ້ບັນລຸຕາມຈຸດປະສົງ ແລະຄາດໝາຍທີ່ວາງໄວ້ ຢ່າງຈົບງາມ.

***ຂໍ້ມູນເພີ່ມຕື່ມ ກະລຸນາຕິດຕໍ່:***

- *ທ່ານ ສັນຕິ ຊົງນາວົງ ຫົວໜ້າພະແນກອົງການຈັດຕັ້ງສາກົນ*

  *ໂທ: 020 2222 3989*